ADB
Corner of Lanexang Avenue and
Samsenthai Road, Vientiane, Lao PDR
Tel: +856 21 250444
Fax: +856 21 250333

www.adb.org

NEWS RELEASE

# ເອດີບີ, ສປປ ລາວ ລົງນາມໃນສັນຍາໂຄງການປັບປຸງລະບົບຄຸ້ມຄອງ ສຸຂານາໄມ, ສຸຂານາໄມພືດ

ນະຄອນຫລວງວຽງຈັນ, ສາທາລະລັດ ປະຊາທິປະໄຕ ປະຊາຊົນລາວ (20 ພະຈິກ 2017) — ໃນວັນທີ່ 13 ພະຈິກ ທີ່ຜ່ານມາ, ທະນາຄານພັດທະນາອາຊີ (ເອດີບີ) ແລະ ລັດຖະບານແຫ່ງສາທາລະນະລັດ ປະຊາທິປະ ໄຕ ປະຊາຊົນລາວ (ສປປ ລາວ) ໄດ້ຮ່ວມລົງນາມໃນສັນຍາທຶນຊ່ວຍເຫລືອລ້າມູນຄ່າ 10 ລ້ານໂດລາສະຫະລັດ ເຊິ່ງເປັນທຶນເພີ່ມໃຫ້ແກ່ໂຄງການທີ່ຈະຊ່ວຍ ເພີ່ມທະວີຄວາມອາດສາມາດໃຫ້ແກ່ວຽກງານສຸຂານາໄມແລະສຸຂານາໄມພືດຂອງ ສປປ ລາວ, ແລະ ປັບປຸງຄວາມປອດໄພທາງ ດ້ານອາຫານ, ພືດແລະສັດໃນປະເທດ.

ສັນຍາທຶນຊ່ວຍເຫລືອລ້າດັ່ງກ່າວແມ່ນໄດ້ຮັບການລົງນາມໂດຍທ່ານ ນາງ ທິບພະກອນ ຈັນທະວົງສາ ຮອງລັດຖະມົນ ຕີກະຊວງການເງິນ ແລະ ທ່ານ ຢະຊູຊິ ເນກິຊິ ຜູ້ຕາງໜ້າສຳນັກງານເອດີບີປະຈຳ ສປປ ລາວ ມີ ທ່ານ ພວງປະຣິສັກ ປຣະວົງວຽງຄຳ ຮອງລັດຖະມົນຕີກະຊວງກະສິກຳແລະປ່າໄມ້ ພ້ອມດ້ວຍບັນດາແຂກຈາກກະຊວງກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານໃນພິທີເຊັນ ສັນຍາດັ່ງກ່າວ.

ທຶນຊ່ວຍເຫລືອລ້າດັ່ງກ່າວນີ້ແມ່ນທຶນເພີ່ມເຕີມໃຫ້ແກ່ທຶນກູ້ຢືມແລະທຶນຊ່ວຍເຫລືອລ້າມູນຄ່າ 14 ລ້ານໂດລາສະຫະລັດ ທີ່ເອດີບີໄດ້ອະນຸມັດໃຫ້ກັບສປປ ລາວ ໃນປີ 2012 ສຳລັບໂຄງການປັບປຸງຄວາມອາດສາມາດດ້ານສຸຂານາໄມ ແລະ ສຸຂານາໄມພືດເພື່ອອຳນວຍຄວາມສະດວກດ້ານການຄ້າໃນເຂດອະນຸພາກພື້ນແມ່ນນ້ຳຂອງ ເພື່ອຍົກລະດັບຂີດຄວາມສາມາດໃຫ້ແກ່ລະບົບຄຸ້ມ ຄອງດ້ານສຸຂານາໄມ ແລະ ສຸຂານາໄມພືດຂອງສປປ ລາວ ໂດຍເພີ່ມທະວີການເຝົ້າລະວັງແລະການຄວບຄຸມ ພ້ອມທັງ ການຕິດຕາມກວດກາສຸຂະພາບຂອງພືດແລະສັດ ແລະ ພ້ອມທັງຄວາມປອດໄພດ້ານອາຫານ.

ທ່ານ ເນກິຊິ ກ່າວວ່າ "ລະບົບຄຸ້ມຄອງສຸຂານາໄມແລະສຸຂານາໄມພືດທີ່ມີປະສິດທິພາບແມ່ນສຳຄັນຫລາຍ ເພື່ອອຳນວຍ ຄວາມສະດວກໃຫ້ແກ່ການຄ້າໃນດ້ານກະສິກຳ, ອາຫານ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ແລະ ເປັນການເພີ່ມທ່າແຮງໃຫ້ກັບ ປະເທດໃນການເຂົ້າຮ່ວມການຄ້າໃນພາກພື້ນແລະໃນໂລກ" ທ່ານຍັງໄດ້ກ່າວຕື່ມອີກວ່າ "ຕົວເລກການຄ້າຂອງປະເທດໄດ້ໃຫ້ເຫັນ ແຈ້ງເຊັ່ນວ່າ: ການເພີ່ມຂຶ້ນຂອງປະລິມານການສົ່ງອອກສິນຄ້າກະສິກາແລະເຄື່ອງປ່າຂອງດົງ ແມ່ນເປັນຜົນມາຈາກລະບົບຄຸ້ມຄອງ ສຸຂານາໄມແລະສຸຂານາໄມພືດທີ່ໄດ້ຮັບການປັບປຸງ, ຕົວຢ່າງເຊັ່ນ: ມູນຄ່າການສົ່ງອອກເຂົ້າຂອງ ສປປ ລາວ ໄປສາທາລະນະ ລັດປະຊາຊົນຈີນ, ໄທ ແລະ ຫວຽດນາມ ໄດ້ເພີ່ມຂຶ້ນເປັນ 33,6 ລ້ານໂດລາສະຫະລັດໃນປີ 2016 ຈາກ 12,3 ລ້ານໂດລາສະຫະ ລັດໃນປີ 2013. ໂຄງການດັ່ງກ່າວນີ້ຈະຊ່ວຍ ສປປ ລາວ ສືບຕໍ່ເພີ່ມທະວີການສົ່ງອອກສິນຄ້າກະສິກຳຂອງຕົນ"

ທຶນເພີ່ມດັ່ງກ່າວຈະສະໜັບສະໜູນບັນດາຂໍ້ລິເລີ່ມຕ່າງໆຂອງ ສປປ ລາວ ເພື່ອເພີ່ມທະວີຂີດຄວາມສາມາດໃຫ້ແກ່ລະບົບຄຸ້ມຄອງສຸຂານາໄມແລະສຸຂານາໄມພືດທີ່ມີປະຈຸບັນ ໃນນັ້ນລວມທັງ ການສ້າງຄວາມເຂັ້ມແຂງດ້ານການເຝົ້າລະວັງແລະຕິດຕາມສຸຂະນາໄມພືດແລະສັດ ແລະ ຄວາມປອດໄພດ້ານອາຫານ; ການເພີ່ມຄວາມຮ່ວມມືແລະຄວາມສອດຄ່ອງໃຫ້ແກ່ບັນຫາການຄຸ້ມຄອງສຸຂານາໄມແລະສຸຂານາໄມພືດໃນພາກພື້ນ; ແລະ ການຍົກລະດັບການສຶກສາໃຫ້ແກ່ບັນດາຊ່ຽວຊານຄຸ້ມຄອງສຸຂານາໄມແລະສຸຂານາໄມພືດຂອງປະເທດ. ບັນດາກິດຈະກຳຕ່າງໆຂອງໂຄງການດັ່ງກ່າວຈະໄດ້ຂະຫຍາຍກວມເອົາເພີ່ມອີກ 5 ແຂວງບຸລິມະສິດເຊັ່ນ: ບໍລິຄຳໄຊ, ຄຳມ່ວນ, ອຸດົມໄຊ, ສະຫວັນນະເຂດ ແລະ ແຂວງວຽງຈັນ.

**Media Inquiries**

Souphavanh Phonmany
Tel: + 856 21 250444 ext. 107
Mob. +856 20 55617237
E-mail: sphonmany@adb.org

Connect with us on Twitter @ADB_HQ

ໂຄງການທີ່ນຳໃຊ້ທຶນເພີ່ມດັ່ງກ່າວຈະໄດ້ຮັບການຈັດຕັ້ງປະຕິບັດໂດຍກະຊວງກະສິກຳແລະປ່າໄມ້, ກະຊວງສາທາລະນະ ສຸກ, ຄະນະກະເສດສາດຂອງມະຫາວິທະຍາໄລແຫ່ງຊາດລາວ, ແລະ ກະຊວງສຶກສາທິການແລະກິລາ, ຊຶ່ງການຈັດຕັ້ງປະຕິບັດໂຄງ ການດັ່ງກ່າວໄດ້ຈະດຳເນີນເປັນເວລາ 3 ປີ ຊຶ່ງຄາດວ່າຈະສຳເລັດພາຍໃນເດືອນ ມິຖຸນາ ປີ 2021.

ເອດີບີ ຊຶ່ງມີສຳນັກງານໃຫຍ່ຕັ້ງຢູ່ນະຄອນຫຼວງມະນິລາ ໄດ້ຮັບມອບໝາຍເພື່ອຫຼຸດຜ່ອນຄວາມທຸກຍາກໃນຂົງເຂດອາຊີ ແລະ ປາຊີຟິກ ໂດຍຜ່ານການຈະເລີນເຕີບໂຕທາງດ້ານເສດຖະກິດທີ່ສົມດຸນ, ການຈະເລີນເຕີບໂຕທີ່ຍືນຍົງດ້ານສິ່ງແວດລ້ອມ, ແລະ ການເຊື່ອມໂຍງໃນພາກພື້ນ. ສ້າງຕັ້ງຂຶ້ນໃນປີ 1966, ເອດີບີ ພວມສະເຫຼີມສະຫຼອງຄົບຮອບ 50 ປີ ຂອງການເປັນຄູ່ຮ່ວມມືພັດທະນາພາຍໃນຂົງເຂດດັ່ງກ່າວ. ເອດີບີ ມີ 67 ປະເທດສະມາຊິດເປັນເຈົ້າຂອງໃນນັ້ນ 48 ປະເທດມາຈາກພາກພື້ນອາຊີແລະ ປາຊີຟິກ. ໃນປີ 2016, ມູນຄ່າການຊ່ວຍເຫຼືອຂອງ ເອດີບີ ທັງໝົດບັນລຸ 31,7 ຕື້ໂດລາສະຫະລັດ ໃນນັ້ນ ລວມທັງທຶນສົມທົບມູນຄ່າ 14 ຕື້ໂດລາສະຫະລັດ.